ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ: 0943

ວັນທີ: 08-11-17

ເລກທີ 2633 /ຫອຄ.ກທຄວ

ນະຄອນຫຼວງວຽງຈັນ, ວັນທີ 07 ພະຈິກ 2017

ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ

- ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ເທດສະບານ
- ຜູ້ລົງທຶນ (ພາຍໃນ ແລະ ຕ່າງປະເທດ) ແລະ ປະຊາຊົນບັນດາເຜົ່າ

ເລື່ອງ: ໃຫ້ຍົກເລີກເງື່ອນໄຂ ການກຳນົດທຶນຈົດທະບຽນຕ່ຳສຸດ ສຳລັບຜູ້ລົງທຶນຕ່າງປະເທດ

ອີງຕາມ... ບົນພື້ນຖານບົດບັນຍັດ ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ສະບັບປັບປຸງ 14/ສພຊ, ລົງວັນທີ 17/11/2016, ຫ້ອງການ (ກະຊວງອຸດສາຫະກຳ ແລະ ການຄ້າ) ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງ ຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ ດັ່ງນີ້:

1) ໃຫ້ຍົກເລີກເງື່ອນໄຂ ຂໍ້ບັງຄັບທຶນຈົດທະບຽນຕ່ຳສຸດ ສຳລັບຜູ້ລົງທຶນຕ່າງປະເທດ ໃນການແຈ້ງຂຶ້ນທະບຽນວິສາຫະກິດ ນັບແຕ່ວັນລົງລາຍເຊັນ ແຈ້ງການສະບັບນີ້ ເປັນຕົ້ນໄປ ເວັ້ນເສຍແຕ່ທຶນຈົດທະບຽນວິສາຫະກິດ ຕ່ຳສຸດ ສຳລັບກິດຈະການຕ່າງໆ ທີ່ລະບຽບກົດໝາຍ ກຳນົດໄວ້ເປັນຢ່າງອື່ນ;

2) ການແຈ້ງຍົກເລີກ ຕາມຂໍ້ 1 ເທິງນີ້ ໃຫ້ມີຜົນ ຕໍ່ທຸກຄຳຮ້ອງຂອງຜູ້ລົງທຶນຕ່າງປະເທດ ທີ່ໄດ້ຍື່ນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ແຕ່ຍັງບໍ່ທັນໄດ້ຮັບການອອກທະບຽນວິສາຫະກິດໃຫ້ ເວັ້ນເສຍແຕ່ຜູ້ລົງທຶນຕ່າງປະເທດ ບໍ່ປະສົງທີ່ຈະປ່ຽນແປງທຶນຈົດທະບຽນວິສາຫະກິດ ທີ່ໄດ້ແຈ້ງຂຶ້ນທະບຽນວິສາຫະກິດໄວ້ແລ້ວນັ້ນ;

3) ໃນເວລາຈັດຕັ້ງປະຕິບັດ ຫາກມີບັນຫາໃດ ໃຫ້ປະສານຂໍຄຳເຫັນ ນຳເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ.

ແຈ້ງມາເພື່ອ ຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າຫ້ອງການ

ຫ້ອງການ

ທ.ບານສະຕິ ເທບພະວົງ

ບ່ອນສົ່ງ: - ຄະນະນຳກະຊວງ ອຄ;

- ກົມສົ່ງເສີມການລົງທຶນ, ກະຊວງ ຜລ;
- ຫ້ອງການ, ສະຖາບັນ ແລະ ບັນດາກົມ ກະຊວງອຄ.